## ໂຄງການ Health Home ຈະເອົາໃຫ້:

- ການຄວບຄຸມເບິ່ງນຳການປິ່ນປົວທີ່ຄົບຖ້ວນ.
- ການປະສານງານການປິ່ນປົວ ແລະ ການສົ່ງເສີມສຸຂະພາບ.
- ການວາງແຜນການຜັນປ່ຽນຕໍ່ມາ.
- ການອູ້ມຊູສ່ວນບຸກຄົນ ແລະ ຄອບຄົວ.
- ການສົ່ງຕໍ່ໄປຫາການບໍລິການຊຸມນຸມຊົນ ແລະ ການອູ້ມຊູ ສັງຄົມທີ່ກ່ຽວພັນນຳ.

**Health Home**

ມັນແມ່ນການປະສານງານການ ປິ່ນປົວເພື່ອຈະສົ່ງເສີມ ສຸຂະພາບ ຂອງທ່ານໃຫ້ດີຂຶ້ນ.





ການປະສານງານການ
ປິ່ນປົວເພື່ອສຸຂະພາບ
ທີ່ດີກວ່າເກົ່າ

# ໂຄງການ Health Home

... ເພື່ອຊີວິດ
ດີກວ່າເກົ່າ!



ໃຊ້ການບໍລິການຂອງ **Health Home** ເພື່ອຈະປະສານງານສຸຂະພາບ ແລະ ການບໍລິການສັງຄົມຂອງທ່ານ ແລະ *ສົ່ງເສີມຊີວິດຂອງທ່ານໃຫ້ດີຂຶ້ນກວ່າເກົ່າ.*

HCA 22-860 LA (7/16) Laotian



“ຂ້າພະເຈົ້າມີແຮງ ບັນດານໃຈຫລາຍກວ່າ ເກົ່າທີ່ຈະເລືອກເອົາ ຫົນທາງທີ່ດີກວ່າ.”

– ລູກຄ້າຂອງ Health Home

**ຜົນສະທ້ອນຕໍ່ທ່ານແມ່ນແນວໃດ?**

ການບໍລິການ Health Home ອູ້ມຊູທ່ານໃນການເດີນທາງໄປຫາສຸຂະພາບຂອງທ່ານ. ການເຂົ້າຮ່ວມນຳຂອງທ່ານແມ່ນຕາມສະມັກໃຈ. ມັນບໍ່ສະທ້ອນເຖິງເງື່ອນໄຂຮັບເອົາການບໍລິການຢ່າງອື່ນຂອງທ່ານ ຫລື ສິດທິຂອງການຮ້ອງທຸກ ແລະການອຸທອນຂອງທ່ານ.

**ໂທຫາເລກ 1-800-562-3022 ເພື່ອຮາຍຮະອຽດ ເພີ້ມເຕີມ**

## Health Home ແມ່ນຫຍັງ?

**Health Home ບໍ່ແມ່ນສະຖານທີ່.** ມັນແມ່ນການບໍລິການຊຸດນຶ່ງເພື່ອຈະອູ້ມຊູຊ່ວຍເຫລືອທ່ານຖ້າຫາກວ່າທ່ານມີສະພາບຊຳເຮື້ອຮ້າຍແຮງ ແລະ ຄວາມຕ້ອງການດ້ານການພະຍາບານ ຫລື ການບໍລິການສັງຄົມຫລາຍກວ່າຢ່າງນຶ່ງ.

ການບໍລິການ Health Home ສາມາດເຮັດໃຫ້ທຸກສິ່ງທຸກຢ່າງແລ່ນສະດວກກວ່າເກົ່າຣະຫວ່າງການອູ້ມຊູດ້ານການພະຍາບານ ແລະ ການບໍລິການສັງຄົມ. ອັນນີ້ອາດຈະຊ່ວຍເຫລືອລຸດຜ່ອນການຢ້ຽມຢາມໂຮງພະຍາບານ ແລະ ຫ້ອງສຸກເສີນລົງ ແລະ ອູ້ມຊູສຸຂະພາບຂອງທ່ານ, ຄວາມຢູ່ດີມີແຮງທັງຫມົດ, ແລະ ການເບິ່ງແຍງບົວຣະບັດຕົນເອງ.

## ການບໍລິການທຳງານແນວໃດ?

- ການບໍລິການ Health Home ຈະຖືກຄວບຄຸມເບິ່ງນຳໂດຍຜ່ານບໍຣິສັດປະສານງານການປິ່ນປົວ.
- ຜູ້ປະສານງານການປິ່ນປົວຈະພົບກັບທ່ານເພື່ອຈະຊ່ວຍເຫລືອທ່ານໃນການອອກແບບແຜນການປະຕິບັດກ່ຽວກັບສຸຂະພາບຂອງທ່ານ.
- ຜູ້ປະສານງານການປິ່ນປົວຈະຮັກສາການຕິດຕໍ່ພົວພັນນຳທ່ານ ແລະ ບໍຣິສັດທີ່ອູ້ມຊູຊ່ວຍເຫລືອທ່ານ ເພື່ອຈະເຮັດໃຫ້ທຸກສິ່ງທຸກຢ່າງເດີນສະດວກ.
- ຖ້າຫາກວ່າທ່ານເຂົ້າ ແລະ ອອກຈາກໂຮງພະຍາບານ, ຜູ້ປະ ສານງານການປິ່ນປົວຈະຊ່ວຍເຫລືອໃນການວາງແຜນການພົນປ່ຽນຕໍ່ມາຂອງທ່ານ.
- ຖ້າຫາກວ່າທ່ານມີບັນຫານຳການຊອກເອົາການອູ້ມຊູຊ່ວຍເຫລືອທີ່ທ່ານຕ້ອງການ, ຜູ້ປະສານງານການປິ່ນປົວສາມາດຊ່ວຍເຫລືອທ່ານໃນການເຮັດວຽກນຳຜູ້ໃຫ້ການບໍລິການ ແລະບໍຣິສັດສຸຂະພາບໂຣກຈິດ ຫລື ການຕິດຢາເສບຕິດ ເພື່ອຈະໄດ້ຮັບການປິ່ນປົວ.

## ການບໍລິການເຫລົ່ານີ້ແມ່ນສຳລັບທ່ານບໍ່?

**ທ່ານອາດຈະມີເງື່ອນໄຂໄດ້ຮັບຖ້າຫາກວ່າທ່ານ:**

- ເປັນຜູ້ຮັບ Medicaid;
- ມີສະພາບຊຳເຮື້ອຮ້າຍແຮງ; ແລະ
- ຢູ່ໃນການສ່ຽງອັນຕະຣາຍຕໍ່ການເປັນເທື່ອທີສອງ.

## ອັນນີ້ຈະຕົກເປັນຣາຄາເທົ່າໃດ?

**ບໍ່ມີ – ມັນແມ່ນການບໍລິການຟຣີ.**

## ອັນນີ້ຈະເຮັດຫຍັງແດ່ໃຫ້ທ່ານ?

- ໃຫ້ການອູ້ມຊູຊ່ວຍເຫລືອເພື່ອຈະຊ່ວຍທ່ານຄວບຄຸມເບິ່ງນຳຄວາມຕ້ອງການພະຍາບານ ແລະ ສັງຄົມທີ່ຫຍຸ້ງຍາກສັບສົນ.
- ໃຫ້ຄວາມຊ່ວຍເຫລືອເພື່ອຈະຊອກຫາ ແລະ ໄດ້ຮັບການບໍລິການປິ່ນປົວຣະຍະຍາວຢູ່ໃນຊຸມນຸມຊົນຂອງທ່ານ.

## ທ່ານຈະເລີ້ມຕົ້ນໄດ້ແນວໃດ?

- ເມື່ອເວລາຜູ້ປະສານງານການປິ່ນປົວຕິດຕໍ່ຫາທ່ານ, ບອກເຂົາເຈົ້າວ່າທ່ານຢາກຈະເຂົ້າຮ່ວມນຳ.
- ແລ້ວ, ເຮັດວຽກນຳຜູ້ປະສານງານການປິ່ນປົວ, ເຮັດແຜນການປະຕິບັດກ່ຽວກັບສຸຂະພາບ, ແລະ ເລີ້ມຕົ້ນເຮັດ!

## ອັນນີ້ຈະປ່ຽນຄົນຜູ້ທີ່ເຮັດວຽກຢູ່ນຳທ່ານດຽວນີ້ບໍ່?

ທ່ານສາມາດດຳເນີນທີ່ຈະເຮັດວຽກຕໍ່ໄປນຳຄົນດຽວກັນ—ໂຄງການມີແຕ່ຈະຕື່ມອີກຄົນນຶ່ງໃສ່ນຳເພື່ອຈະຊ່ວຍເຫລືອທ່ານອອກແບບແຜນ ແລະ ຕິດຕາມນຳແຜນການປະຕິບັດກ່ຽວກັບສຸຂະພາບຂອງທ່ານ. ທ່ານສາມາດດຳເນີນທີ່ຈະເຮັດວຽກຕໍ່ໄປນຳ:

- ຜູ້ເບິ່ງແຍງດູແລຜູ້ທີ່ຖືກຈ່າຍເງິນໃຫ້ຂອງທ່ານ.
- ຄົນອື່ນໆຜູ້ທີ່ທ່ານເຮັດວຽກນຳ (ຕົວຢ່າງວ່າ, ທ່ານຫມໍ, ນາຍຫມໍ, ຫມໍບຳບັດຮ່າງກາຍ, ຜູ້ປຶກສາສຸຂະພາບໂຣກຈິດ, ແລະ ພະນັກງານການຕິດຢາເສບຕິດ).
- ຜູ້ຈັດການເອກສານຂອງຫ້ອງການເບິ່ງແຍງຄົນແກ່ຊາຣາເຂດ ແລະ ອື່ນໆຂອງທ່ານ.

Washington State Health Care Authority

Washington State Department of Social & Health Services

Transforming lives